**ມິຊຊາອາທິດທີ 21 ກຳນົດທຳມະດາ**

**ວັນທີ 21 ສິງຫາ 2022**



**ພຣະວໍລະສານໂດຍນັກບຸນລູກາ 13, 22-30**

ໃນເວລາທີ່ສະເດັດໄປນະຄອນເຢລູຊາແລມນັ້ນ, ພຣະເຢຊູເຈົ້າກໍໄດ້ເທດສະໜາສັ່ງສອນໄປຕາມບ້ານເມືອງທີ່ພຣະອົງຊົງຜ່ານໄປ. ມີຜູ້ໜຶ່ງທູນພຣະອົງວ່າ: ພຣະອາຈານ, ມີແຕ່ໜ້ອຍຄົນບໍທີ່ຈະໄດ້ຮອດ? ພຣະເຢຊູເຈົ້າຕອບວ່າ: ຈົ່ງພະຍາຍາມເຂົ້າທາງປະຕູແຄບເຖີດ. ເຮົາບອກພວກເຈົ້າວ່າ: ມີຫລາຍຄົນຢາກເຂົ້າທາງປະຕູນີ້ແຕ່ເຂົ້າບໍ່ໄດ້. ເມື່ອເຈົ້າເຮືອນຈະລຸກຂຶ້ນໄປອັດປະຕູແລ້ວ ພວກເຈົ້າຜູ້ຢູ່ນອກກໍຈະພາກັນເຄາະປະຕູເວົ້າວ່າ: ນາຍເອີຍ, ໄຂເອີາພວກຂ້ານ້ອຍແດ່. ເພິ່ນຈະຕອບພວກເຈົ້າວ່າ: ເຮົາບໍ່ຮູ້ຈັກພວກເຈົ້າມາແຕ່ໃສ. ແລ້ວພວກເຈົ້າຈະພາກັນເວົ້າວ່າ: ພວກຂ້ານ້ອຍໄດ້ກິນໄດ້ດື່ມກັບນາຍ. ນາຍເອງກໍໄດ້ເທດສະໜາສັ່ງສອນພວກຂ້ານ້ອຍຢູ່ຕາມທີ່ຊຸມນຸມຕ່າງໆ. ສ່ວນເຈົ້າເຮືອນກໍຈະຕອບວ່າ: ເຮົາບໍ່ຮູ້ຈັກພວກເຈົ້າມາແຕ່ໃສ. ພວກຄົນຊົ່ວທັງຫລາຍເອີຍ, ຈົ່ງພາກັນໜີໄປໄກໆ, ໄປຢູ່ບ່ອນທີ່ມີແຕ່ຮ້ອງໄຫ້ແລະກັດແຂ້ວກັດຟັນ.

ພວກເຈົ້າຈະໄດ້ເຫັນອາບຣາຮາມ, ອີຊາອັກ, ຢາກັອບ, ແລະພວກປະພາສົກທັງຫລາຍຢູ່ໃນອານາຈັກຂອງພຣະເຈົ້າ.

ສ່ວນພວກເຈົ້ານັ້ນຕ້ອງຖືກໄລ່ໄປຢູ່ທາງນອກ. ຈະມີຄົນຈາກທິດຕາເວັນອອກ, ທິດຕາເວັນຕົກ, ທິດເໜືອທິດໃຕ້ມານັ່ງຮ່ວມກິນລ້ຽງໃນອານາຈັກຂອງພຣະເຈົ້າ. ແມ່ນແທ້, ພວກຢູ່ຫລັງຈະມາຢູ່ໜ້າ ແລະພວກຢູ່ໜ້າຈະມາຢູ່ຫລັງ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວັນນີ້, ພຣະເຢຊູເຈົ້າພ້ອມດ້ວຍລູກສິດກຳລັງເດີນທາງມຸ່ງສູ່ນະຄອນເຢລູຊາແລມແລະພຣະອົງເອງກໍບໍ່ຢຸດຢ່ອນທີ່ຈະເທດສະໜາສັ່ງສອນ. ອາດຈະແມ່ນພຣະອົງບໍ່ໄດ້ຮັບການຕ້ອນຮັບໃນໂຮງທຳບ່ອນພຣະອົງຜ່ານໄປ, ດັ່ງນັ້ນພຣະເຢຊູເຈົ້າຈຶ່ງເທດສອນຕາມບ້ານຕາມເມືອງຕ່າງໆ.

ໃນເວລາເທດສອນກໍມີຄົນຜູ້ໜຶ່ງຖາມພຣະເຢຊູເຈົ້າກ່ຽວກັບຈຳນວນຄົນທີ່ໄດ້ຮັບຄວາມຮອດ. ແທນທີ່ພຣະອົງຈະຕອບເຂົາວ່າ: ມີຈຳນວນຫລາຍ ຫລືໜ້ອຍ. ພຣະເຢຊູເຈົ້າພັດບອກເຂົາວິທີທີ່ຈະໄດ້ຮອດອັນແມ່ນຄວາມພະຍາຍາມເຂົ້າທາງປະຕູແຄບ. ໝາຍຄວາມວ່າແນວໃດ? ໝາຍວ່າຄວາມຮອດແມ່ນພຣະຄຸນພຣະເຈົ້າສຳລັບທຸກຄົນໂດຍບໍ່ຈຳແນກເຊື້ອຊາດ, ຊົນຊັ້ນ, ຄວາມເຊື່ອຖື ຫລືກຸ່ມຄົນໃດໜຶ່ງ. ແຕ່ເພື່ອຈະໄດ້ຮັບຄວາມຮອດນັ້ນ,ແຕ່ລະຄົນຕ້ອງໄດ້ພະຍາຍາມເຂົ້າໃຈແລະປະຕິບັດຕາມສິ່ງທີ່ພຣະອົງບອກສອນ. ຍ້ອນຫຍັງ? ຍ້ອນມີຫລາຍຄົນໄດ້ຟັງວາຈາຂອງພຣະອົງ, ໄດ້ກິນ, ໄດ້ດື່ມຮ່ວມກັບພຣະອົງແຕ່ພຣະອົງບໍ່ຮູ້ຈັກພວກເຂົາ. ຍ້ອນພວກເຂົາບໍ່ໄດ້ທຳໃຫ້ວາຈາຂອງພຣະອົງມີຊີວິດໃນຊີວິດຂອງພວກເຂົາ. ດັ່ງນັ້ນ, ຜູ້ທີ່ເປັນພຣະວາຈານາດຄື ພຣະເຢຊູເຈົ້າ, ພຣະອົງຈຶ່ງບໍ່ຮູ້ຈັກພວກເຂົາ.

ຈຸດນີ້ອາດເປັນຄຳຖາມສຳລັບພວກເຮົາແຕ່ລະຄົນຜູ້ເປັນສິດຂອງພຣະເຢຊູເຈົ້າ, ຜູ້ເດີນຕາມພຣະອົງໄປ, ຜູ້ໄດ້ຟັງວາຈາພຣະອົງ, ຜູ້ໄດ້ຮັບການລ້ຽງເກືອດ້ວຍພຣະກາຍແລະພຣະໂລຫິດຂອງພຣະອົງ. ພວກເຮົາໄດ້ຮູ້ຈັກພຣະອົງບໍ? ພວກເຮົາໄດ້ຈື່ຈຳສິ່ງທີ່ພຣະອົງບອກສອນພວກເຮົາບໍ? ພວກເຮົາໄດ້ພະຍາຍາມປະຕິບັດໃຫ້ເປັນຈິງສິ່ງທີ່ພຣະອົງສອນພວກເຮົາບໍ? ພວກເຮົາໄດ້ເຂົ້າທາງປະຕູແຄບບໍ? ຖ້າຫາກພວກເຮົາບໍ່ໄດ້ເຂົ້າທາງປະຕູແຄບ, ອັນແມ່ນປະຕູແຫ່ງການດັດແປງແກ້ໄຂແລະກັບຈິດປ່ຽນໃຈ; ພວກເຮົາກໍຈະບໍ່ໄດ້ຮ່ວມໂຕະກັບພຣະອົງໃນອານາຈັກສະຫວັນ. ກົງກັນຂ້າມ, ຜູ້ຊຶ່ງບໍ່ໄດ້ຮັບສິນລ້າງບາບ, ບໍ່ໄດ້ຟັງຄຳເທດສອນຂອງພຣະອົງ, ບໍ່ໄດ້ຫລໍ່ລ້ຽງດ້ວຍພຣະກາຍແລະພຣະໂລຫິດຂອງພຣະອົງ, ແຕ່ເຂົາມີຊີວິດແລະການປະຕິບັດທີ່ສອດຄ່ອງກັບພຣະທຳບັນຍັດແຫ່ງຮັກຂອງພຣະເຈົ້າ. ແນ່ນອນ, ພຣະເຢຊູເຈົ້າກໍຈະໄຂປະຕູຮັບເອົາເຂົາເຂົ້າຮ່ວມສຸກກັບພຣະອົງໃນເມືອງສະຫວັນ. ເພາະ « ຜູ້ສຸດທ້າຍຈະເປັນຜູ້ທີຕົ້ນແລະຜູ້ທີຕົ້ນຈະເປັນຜູ້ສຸດທ້າຍ ».

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ຮູ້ຈັກເລືອກເຂົ້າທາງປະຕູແຄບ, ອັນແມ່ນປະຕູແຫ່ງການກັບຈິດປ່ຽນໃຈແຕ່ລະມື້ແຕ່ລະວັນ. ເພື່ອລູກຈະໄດ້ຜ່ານປະຕູແຄບນີ້ແລະເຂົ້າຮ່ວມສຸກກັບພຣະອົງໃນເມືອງສະຫວັນດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ